สาทาละนะลัด ปะຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

******** 00 ********

ກະຊວງປ້ອງກັນປະເທດ

ເລກທີ່ 2450 / ກປທ

ນະຄອນຫລວງວຽງຈັນ, ວັນທີ 5 / 8 / 2010

# *ຂໍ້ຕົກລົງ*

## *ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ*

## *ກ່ຽວກັບການຄຸ້ມຄອງວັດຖຸທາດລະເບີດອຸດສາຫະກຳ.*

- ອີງຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີວ່າດ້ວຍ ລະບຽບການຄຸ້ມຄອງແລະນຳໃຊ້ທາດລະເບີດ ຢູ່ ສປປ ລາວ ເລກທີ 39/ນຍ ລົງວັນທີ 12/7/2001.
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງປ້ອງກັນປະເທດວ່າດ້ວຍ ສິດອະນຸຍາດນຳເຂົ້າວັດຖຸທາດລະເບີດ ຈາກຕ່າງປະເທດເຂົ້າໃນສປປລາວ ເລກທີ 88/ກປທ ລົງວັນທີ21/7/2005.
- ອີງຕາມ ແຈ້ງການຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ກ່ຽວກັບ ສິນຄ້າຄວບຄຸມທີ່ຕ້ອງອະນຸຍາດນຳເຂົ້າ ແລະ ສົ່ງອອກ ແບບບໍ່ອັດຕະໂນມັດ ຂອງ ສປປ ລາວ ສະບັບເລກທີ 2151/ ອຄ.ກຂອ ລົງວັນທີ 30/10/2009 .

ເພື່ອຮັບປະກັນໃນການຄຸ້ມຄອງ ວັດຖຸທາດລະເບີດອຸດສາຫະກຳທີ່ນຳໃຊ້ໃນວຽກງານພັດທະນາເສດຖະກິດໃຫ້ມີປະສິດທິຜົນ ພ້ອມກັນນັ້ນຮັບປະກັນທັງວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ ຈຶ່ງໄດ້ອອກຂໍ້ຕົກລົງ ເພື່ອກຳນົດລະບຽບການຄຸ້ມຄອງວັດຖຸທາດລະເບີດ ອຸດສາຫະກຳ ເຊິ່ງມີເນື້ອໃນລະອຽດດັ່ງນີ້:

*ມາດຕາ 1 : ນິຍາມຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້.*

1.1 *ທາດລະເບີດ:* ແມ່ນທາດເຄມີດ່ຽວຫລືທາດເຄມີປະສົມທີ່ໄດ້ຜະລິດນຳໃຊ້ເພື່ອໃຫ້ເກີດປະຕິກິລິຍາການລະເບີດ ດ້ວຍການກະທົບຈາກກະຕຸ້ນ ກົນລະສາດ, ຄວາມຮ້ອນ, ເຄມີ ຫຼືໄຟຟ້າ.

1.2 *ອຸປະກອນລະເບີດ:* ແມ່ນບັນດາ ແກັບແຕກ, ສາຍແຕກ, ສາຍຊະນວນ, ບຸດສະເຕີ ແລະ ບັນດາວັດຖຸທີ່ມີທາດລະເບີດ ເພື່ອໃຫ້ເກີດຜົນການກະຕຸ້ນໃນເບື້ອງຕົ້ນ ເຮັດໃຫ້ທາດລະເບີດອື່ນລະເບີດຂຶ້ນ.

1.3 *ວັດຖຸທາດລະເບີດອຸດສາຫະກຳ* : ແມ່ນລວມມີທາດລະເບີດ ແລະ ອຸປະກອນລະເບີດທີ່ຖືກນຳໃຊ້ເຂົ້າເປົ້າໃນໝາຍພົນລະເຮືອນ.

*ມາດຕາ 2 : ຈຸດປະສົງ.*

ຂໍ້ຕົກລົງສະບັບນີ້ສ້າງຂຶ້ນເພື່ອຮັບປະກັນໃນການຄຸ້ມຄອງ ວັດຖຸທາດລະເບີດອຸດສາຫະກຳໂດຍປາສະຈາກຄວາມອັນຕະລາຍແລະພ້ອມກັນນັ້ນແມ່ນຮັບປະກັນຄວາມປອດໄພຢູ່ໃນສັງຄົມ . ວັດຖຸທາດລະເບີດອຸດ

ສາຫະກຳ ແມ່ນ ວັດຖຸທາດລະເບີດທີ່ໄດ້ກຳນົດເປັນລາຍການ ເຊິ່ງໄດ້ລະບຸໃນຂໍ້ຕົກລົງສະບັບນີ້ ເພື່ອຮັບໃຊ້ໃນກິດຈະການວິຊາວະກຳເຊັ່ນ ສຳຫລວດ ແລະ ຂຸດຄົ້ນບໍ່ແຮ່ ແລະໂຄງການກໍ່ສ້າງຕ່າງໆ .

*ມາດຕາ 3: ການກຳນົດປະເພດວັດຖຸທາດລະເບີດອຸດສາຫະກຳ .*

ວັດຖຸທາດລະເບີດ ອຸດສາຫະກຳໄດ້ກຳນົດແລະແບ່ງອອກເປັນ 4 ປະເພດຄື :

1 ປະເພດທາດລະເບີດ: ແມ່ນດິນລະເບີດທີ່ນຳໃຊ້ໃນການຈູດລະເບີດຕ່າງໆທີ່ຜະລິດຢູ່ໂຮງງານ ຫລື ການປະສົມລະເບີດຢູ່ກັບທີ່ ( ຢູ່ສະໜາມ ) .

2 ປະເພດອຸປະກອນລະເບີດ: ແມ່ນຜະລິດຕະພັນກະຕຸ້ນວັດຖຸທາດລະເບີດ ທີ່ນຳໃຊ້ສຳຫລັບຈູດລະເບີດ ປະກອບດ້ວຍ : ບັນດາແກັບທຸກສະນິດ ,ສາຍແຕກ, ສາຍຂະນວນໄໝ້ຊ້າ ແລະ ບຸດສະເຕີ.

3 ປະເພດວັດຖຸດິບ: ແມ່ນວັດຖຸດິບທີ່ນຳໃຊ້ເຂົ້າໃນການຜະລິດວັດຖຸທາດລະເບີດອຸດສາຫະກຳທຸກສະນິດ.

4 ປະເພດດອກໄມ້ໄຟ : ແມ່ນບັ້ງໄຟດອກທີ່ຈູດຮັບໃຊ້ໃນການສະເຫຼີມສະຫຼອງໃນງານຕ່າງໆ.

*ມາດຕາ 4: ການຄຸ້ມຄອງ*

- ວັດຖຸທາດລະເບີດອຸດສາຫະກຳທີ່ໄດ້ກຳນົດຢູ່ໃນ ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ຈະຕ້ອງຄຸ້ມຄອງໂດຍ ກົມອຸດສາຫະກຳປ້ອງກັນຊາດ , ກົມໃຫຍ່ພະລາທິການກອງທັບ , ກະຊວງປ້ອງກັນປະເທດ .

- ເພື່ອຮັບປະກັນໃນການຄຸ້ມຄອງໃຫ້ມີຄວາມຮັດກຸມ ແລະ ມີຄວາມປອດໄພສູງ ຜູ້ຜະລິດ , ຜູ້ຈຳໜ່າຍ , ຜູ້ນຳເຂົ້າ - ສົ່ງອອກ , ຜູ້ນຳໃຊ້ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈະຕອ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ແລະ ທຸກຂໍ້ກຳນົດທີ່ກົມອຸດສາຫະກຳປ້ອງກັນຊາດວາງອອກຢ່າງເຂັ້ມງວດເຊັ່ນ :

1 - ຂໍ້ກຳນົດວ່າດວ້ຍມາດຖານ ສາງເກັບມ້ຽນວັດຖຸທາດລະເບີດອຸດສາຫະກຳ.

2 - ຂໍ້ກຳນົດວ່າດວ້ຍລະບຽບ ການຂົນສົ່ງ ວັດຖຸທາດລະເບີດອຸດສາຫະກຳ.

3 - ຂໍ້ກຳນົດວ່າດວ້ຍລະບຽບ ການນຳໃຊ້ ວັດຖຸທາດລະເບີດອຸດສາຫະກຳ.

4 - ຂໍ້ກຳນົດວ່າດວ້ຍ ການກວດກາ ວັດຖຸທາດລະເບີດອຸດສາຫະກຳ.

*ມາດຕາ 5 : ສິດແລະໜ້າທີ່ຂອງກົມອຸດສາຫະກຳປ້ອງກັນຊາດກ່ຽວກັບການຄຸ້ມຄອງ ວັດຖຸທາດລະເບີດອຸດສາຫະກຳ.*

ເພື່ອຮັບປະກັນໃນການຄຸ້ມຄອງໃຫ້ມີຄວາມປອດໄພ ແລະ ຮັດກຸມໃນການຈັດຕັ້ງປະຕິບັດ ກົມອຸດສາຫະກຳປ້ອງກັນຊາດ ມີສິດແລະໜ້າທີ່ ຄືດັ່ງນີ້:

1. ສ້າງ ແລະ ສະເໜີນຳໃຊ້ຂໍ້ກຳນົດ ກົດລະບຽບໃນການຄຸ້ມຄອງ ວັດຖຸທາດລະເບີດອຸດສາຫະກຳ , ທົບທວນດັດແກ້ ຫຼືສ ສະເໜີ ລົບລ້າງ ຂໍ້ກຳນົດຕ່າງໆທີ່ກ່ຽວຂ້ອງ .

2. ອອກໃບອະນຸຍາດ ແລະ ໃບຢັ້ງຢືນ ຫລື ລົບລ້າງ ບັນດາເອກະສານກ່ຽວກັບການຄຸ້ມຄອງວັດຖຸທາດລະເບີດໂດຍກົມອຸດສາຫະກຳປ້ອງກັນຊາດທີ່ໄດ້ສ້າງຂຶ້ນ .

3. ອອກໃບອະນຸຍາດນຳໃຊ້ລະເບີດ ອຸດສາຫະກຳຂອງບາງໂຄງການທີ່ມີຄວາມຈຳເປັນຕອ້ງນຳໃຊ້ .

4. ປະສານສົມທົບ ກັບບໍລິສັດ ທີ່ມີໃບອະນຸຍາດດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ຫລື ຜະລິດວັດຖຸທາດລະເບີດອຸດສາຫະກຳ ເພື່ອສ້າງຂໍ້ກຳນົດ ກົດລະບຽບໃນການຄຸ້ມຄອງບໍລິຫານ .

5. ກວດກາການຈັດຕັ້ງປະຕິບັດບັນດາຂໍ້ກຳນົດ ແລະ ລະບຽບການຄຸ້ມຄອງວັດຖຸທາດລະເບີດ .

6. ເປັນເຈົ້າການ ສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ກວດກາແລະແກ້ໄຂກໍລະນີຕ່າງໆທີ່ພົວພັນກັບວັດຖຸທາດລະເບີດອຸດສາຫະກຳ.

*ມາດຕາ 6 : ການນຳເຂົ້າ , ສົ່ງອອກ , ຜະລິດ ແລະ ຈຳໜ່າຍ*

*6.1-- ການນຳເຂົ້າ*

ບໍລິສັດ ທີ່ມີຈຸດປະສົງສະເໜີຂໍອະນຸຍາດນຳເຂົ້າວັດຖຸທາດລະເບີດອຸດສາຫະກຳ ເພື່ອມານຳໃຊ້ໃນໂຄງການຢູ່ໃນສປປ ລາວ ຈະຕ້ອງມີໃບອະນຸຍາດກ່ຽວກັບການດຳເນີນທຸລະກິດດ້ານວັດຖຸທາດລະເບີດອຸດສາຫະກຳຢູ່ສປປ ລາວໂດຍສອດຕາມລະບຽບກົດໝາຍ, ພ້ອມກັນນັ້ນຈະຕ້ອງປະກອບເອກະສານຊຶ່ງໄດ້ກຳນົດກ່ຽວກັບສິນຄ້າຄວບຄຸມທີ່ຕ້ອງຂໍອະນຸຍາດ ນຳເຂົ້າ - ສົ່ງອອກ ແບບບໍ່ອັດຕະໂນມັດຂອງ ສປປ ລາວ ສະບັບເລກທີ 2151/ ອຄ.ກຂອ, ລົງວັນທີ 30/10/2010 ແລະ ບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດການນຳເຂົ້າ - ສົ່ງອອກວັດຖຸທາດລະເບີດອຸດສາຫະກຳ ຂອງກົມອຸດສາຫະກຳປ້ອງກັນຊາດ ເພື່ອນຳສະເໜີຂໍອະນຸຍາດຈາກກົມອຸດສາຫະກຳປ້ອງກັນຊາດ .

*6.2-- ການສົ່ງອອກ*

ບໍລິສັດ ທີ່ມີໂຮງງານ ຜະລິດວັດຖຸທາດລະເບີດອຸດສາຫະກຳຢູ່ໃນ ສປປ ລາວ ຊຶ່ງມີໃບອະນຸຍາດກ່ຽວກັບການດຳເນີນທຸລະກິດຜະລິດວັດຖຸທາດລະເບີດອຸດສາຫະກຳມີສິດສົ່ງອອກຜະລິດຕະພັນຂອງຕົນໄປຈຳໜ່າຍຢູ່ຕ່າງປະເທດ ໂດຍສອດຕາມລະບຽບກົດໝາຍ ແລະ ພ້ອມກັນນັ້ນ ຈະຕ້ອງ ປະຕິບັດຕາມບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດການນຳເຂົ້າ - ສົ່ງອອກວັດຖຸທາດລະເບີດອຸດສາຫະກຳ ຂອງກົມອຸດສາຫະກຳປ້ອງກັນຊາດ .

*6.3 - ການຜະລິດ*

-ການຜະລິດວັດຖຸທາດລະເບີດອຸດສາຫະກຳຈະຕ້ອງດຳເນີນໂດຍບໍລິສັດທີ່ໄດ້ຮັບການອະນຸຍາດຈາກກະຊວງປ້ອງກັນປະເທດ ແລະ ການອະນຸຍາດລົງທຶນຈາກລັດຖະບານ ສປປ ລາວ ໂດຍສອດຄອງຕາມຕາມກົດໝາຍ

*6.4- ການຈຳໜ່າຍ*

- ບໍລິສັດ ທີ່ມີໂຮງງານ ຜະລິດວັດຖຸທາດລະເບີດອຸດສາຫະກຳຢູ່ໃນ ສປປ ລາວ ຊຶ່ງມີໃບອະນຸຍາດກ່ຽວກັບການດຳເນີນທຸລະກິດຜະລິດວັດຖຸທາດລະເບີດອຸດສາຫະກຳຈຶ່ງ ມີສິດຈຳໜ່າຍຜະລິດຕະພັນຂອງຕົນຢູ່ໃນ ສປປ ລາວໂດຍສອດຕາມລະບຽບກົດໝາຍ .
- ຫ້າມບໍ່ໃຫ້ບໍລິສັດ , ອົງການຈັດຕັ້ງບໍລິຫານ ຫລື ບຸກຄົນໃດໜຶ່ງ ທີ່ບໍ່ມີໃບອະນຸຍາດກ່ຽວກັບການ ດຳເນີນທຸລະກິດຜະລິດວັດຖຸທາດລະເບີດອຸດສາຫະກຳນຳເຂົ້າວັດຖຸ ທາດລະເບີດອຸດສາຫະກຳມາຈຳໜ່າຍ ຢູ່ໃນ ສປປ ລາວຢ່າງເດັດຂາດ .

*ມາດຕາ 7 : ການຂົນສົ່ງ*

- ທຸກຄັ້ງທີ່ມີການຈັດຕັ້ງຂົນສົ່ງວັດຖຸທາດລະເບີດ ອຸດສາຫະກຳຈະຕ້ອງສະເໜີຂໍໃບອະນຸຍາດເຄື່ອນຍ້າຍຈາກກົມອຸດສາຫະກຳປ້ອງກັນຊາດນອກຈາກການຂົນສົ່ງຢູ່ພາຍໃນໂຮງງານ , ເຂດບໍ່ແຮ່ ຫລື ຂົງເຂດກໍ່ສ້າງຕ່າງໆ.
- ພາຫະນະສຳລັບນຳໃຊ້ໃນການຂົນສົ່ງວັດຖຸທາດລະເບີດອຸດສາຫະກຳ ຈະຕ້ອງອອກແບບມາສະເພາະ ແລະ ຂັບຂີ່ໂດຍຜູ້ຂັບຂີ່ທີ່ໄດ້ຮັບການຝຶກອົບຮົມກ່ຽວກັບການຂົນສົ່ງວັດຖຸທາດລະເບີດອຸດສາຫະກຳ ເຊິ່ງມີໃບຢັ້ງຢືນຈາກ ກົມອຸດສາຫະກຳປ້ອງກັນຊາດ , ພ້ອມກັນນັ້ນຈະຕ້ອງປະຕິບັດຕາມລະບຽບການ ແລະ ຂໍ້ກຳນົດຕ່າງ ໆ ກ່ຽວກັບການຄຸ້ມຄອງວັດຖຸທາດລະເບີດ ອຸດສາຫະກຳທີ່ກົມອຸດສາຫະກຳປ້ອງກັນຊາດວາງອອກ .

*ມາດຕາ 8 : ສາງເກັບມ້ຽນວັດຖຸທາດລະເບີດອຸດສາຫະກຳ .*

- ເພື່ອຮັບປະກັນຄວາມປອດໄພ ຜູ້ນຳເຂົ້າ -ສົ່ງອອກ , ຜູ້ຜະລິດ , ຜູ້ຈຳໜ່າຍ ແລະ ຜູ້ນຳໃຊ້ຈະຕ້ອງມີສາງເກັບມ້ຽນວັດຖຸທາດລະເບີດອຸດສາຫະກຳທີ່ສອດຄ່ອງກັບມາດຕະຖານຂອງສາງເກັບມ້ຽນວັດຖຸທາດລະເບີດທີ່ໄດ້ກຳນົດ .

* ສາງເກັບມ້ຽນວັດຖຸທາດລະເບີດໄດ້ແບ່ງອອກເປັນສອງປະເພດຄືສາງຄົງທີ່ ແລະ ສາງເຄື່ອນທີ່ :

*1- ສາງຄົງທີ່ :*

ສາງຄົງທີ່ແມ່ນສາງທີ່ມີການປະກອບສ້າງແໜ້ນໜາເຄື່ອນຍ້າຍບໍ່ໄດ້.

*2- ສາງເຄື່ອນທີ່ :*

ສາງເຄື່ອນທີ່ເປັນສາງທີ່ມີການປະກອບສ້າງແບບບໍ່ແໜ້ນໜາຖາວອນ ແລະ ສາມາດເຄື່ອນຍ້າຍໄດ້.

ການສ້າງ ສາງເກັບມ້ຽນວັດຖຸທາດລະເບີດທຸກປະເພດຈະແມ່ນ ສາງຄົງທີ່ ຫລື ສາງເຄື່ອນທີ່ ຈະຕ້ອງສະເໜີຂໍອະນຸຍາດຈາກອົງການປ້ອງກັນຊາດ ປ້ອງກັນຄວາມສະຫງົບຂັ້ນແຂວງທີ່ກ່ຽວຂ້ອງ ແລະ ໄດ້ຮັບ ການຢັ້ງຢືນຈາກກົມອຸດສາຫະກຳປ້ອງກັນຊາດຈຶ່ງຈະມີສິດນຳໃຊ້ໄດ້ , ພ້ອມກັນນັ້ນເພື່ອຮັບປະກັນຄວາມ ປອດໄພຈະຕ້ອງປະຕິບັດຕາມມາດຖານທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ກຳນົດກ່ຽວກັບສາງເກັບມ້ຽນວັດຖຸທາດລະເບີດ ອຸດສາຫະກຳຂອງກົມອຸດສາຫະກຳປ້ອງກັນຊາດວາງອອກຢ່າງເຂັ້ມງວດ .

*ມາດຕາ 9 : ການກວດກາ .*

- ກົມອຸດສາຫະກຳປ້ອງກັນຊາດ ແລະ ອົງການທີ່ມີສິດກ່ຽວຂ້ອງຈະເປັນຜູ້ ສ້າງແຜນຄຸ້ມຄອງ ແລະກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ .
- ຜູ້ທີ່ຖືກກວດກາ ຈະບໍ່ມີສິດປະຕິເສດຕໍ່ການກວດກາໃນທຸກກໍລະນີ .
- ພາຍຫລັງສຳເລັດການກວດກາ ຜູ້ທີ່ຖືກແຕ່ງຕັ້ງເປັນຜູ້ກວດກາ ຈະຕ້ອງແຈ້ງໃຫ້ຜູ້ທີ່ຖືກກວດກາຮັບຊາບກ່ຽວກັບຜົນໃດຮັບຂອງການກວດກາ .ໃນກໍລະນີພົບເຫັນຄວາມຜິດພາດຈະຕ້ອງແຈ້ງໃຫ້ຜູ້ທີ່ຖືກກວດກາຮັບຮູ້ໂດຍມີຂໍ້ມູນ ຫລັກຖານອ້າງອີງຢ່າງສົມເຫດສົມຜົນ .
- ໃນກໍລະນີພົບເຫັນບັນຫາທີ່ເກີດຂຶ້ນນັ້ນ ພາໃຫ້ມີຄວາມອັນຕະລາຍເກີດຂຶ້ນ ຜູ້ທີ່ຖືກແຕ່ງຕັ້ງເປັນຜູ້ກວດກາຕ້ອງຮີບດ່ວນແຈ້ງໃຫ້ກົມອຸດສາຫະກຳຊາບ ແລະ ອອກຄຳສັ່ງໃຫ້ປະຕິບັດມາດຕະການສຸກເສີນ ພ້ອມກັນນັ້ນໃນກໍລະນີຈຳເປັນ ຈະຕ້ອງຢຸດຕິການນຳໃຊ້ຊົ່ວຄາວຈົນກ່ວາຈະໄດ້ຮັບການແກ້ໄຂ.

*ມາດຕາ 10 : ດ້ານລະບຽບການ ແລະ ກົດໝາຍ .*

- ຜູ້ທີ່ລະເມີດ ແລະ ກະທຳຜິດຕໍ່ຂໍ້ຕົກລົງສະບັບນີ້ຈະຕ້ອງລົງໂທດຕາມລະບຽບກົດໝາຍ .
- ກົມອຸດສາຫະກຳປ້ອງກັນຊາດ , ຜູ້ຜະລິດ ,ຜູ້ຈຳໜ່າຍ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈະຕ້ອງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ .

*ໝາຍເຫດ* : ສຳລັບວັດຖຸທາດລະເບີດທີ່ນຳໃຊ້ໃນກິດຈະການການທະຫານ ລວມທັງການຜະລິດ , ນຳເຂົ້າ, ສົ່ງອອກ , ຂົນສົ່ງ ແລະ ເກັບຮັກສາຈະບໍ່ນອນຢູ່ໃນການຄຸ້ມຄອງຂອງຂໍ້ຕົກລົງສະບັບນີ້ .

*ມາດຕາ 11 :* ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ .

ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ

ກະຊວງປ້ອງກັນປະເທດ

ລັດຖະມົນຕີ

ດວງໃຈ ພິຈິດ